# ແຜນການສອນ ເພດສຶກສາ

## ສຳລັບອາຊີຕາເວັນອອກສຽງໃຕ້ ຂອງ amaze

ເຮົາຈະເປັນພັນທະມິດ
ກັບກຸ່ມຄົນ
LGBTQIA+
ໄດ້ແນວໃດ



# ກ່ຽວກັບບົດຮຽນບົດນີ້...

ແຜນການສອນນີ້ ແມ່ນຫນຶ່ງໃນຊຸດແຜນການສອນທີ່ມີ 9 ບົດແຍກ ທີ່ເປັນຕົ້ນສະບັບ ເພື່ອສະໜັບສະໜູນການສອນວິຊາເພດສຶກສາ ໃນໂຮງຮຽນ ຫຼື ນອກໂຮງຮຽນ ໃນອາຊີຕາເວັນອອກສຽງໃຕ້. ແຜນການສອນຕົ້ນສະບັບນີ້ຖືກອອກແບບມາເພື່ອລວມເຂົ້າໃຊ້ໃນຊຸດວິດີໂອເພື່ອການສຶກສາຂອງ AMAZE ທີ່ກ່ຽວຂ້ອງກັບຫົວຂໍ້ແຜນການສອນ ແລະ ສາມາດນຳໃຊ້ເພື່ອເສີມກັບແຜນການສອນ ຫຼື ແຫຼ່ງຂໍ້ມູນ ທີ່ມີຢູ່ແລ້ວ ທີ່ທ່ານອາດໃຊ້ໃນການນຳສະເໜີວິຊາເພດສຶກສາ.

ຕາມຫຼັກການແລ້ວ, ການຮຽນຮູ້ກ່ຽວກັບຫົວຂໍ້ເພດສຶກສາສະເພາະໃດໜຶ່ງ ຄວນໃຫ້ຜູ້ຮຽນມີໂອກາດໄດ້ພັດທະນາ, ນຳໃຊ້ ແລະ ຝຶກຝົນການຮຽນຮູ້ ໃນແງ່ຂອງຄວາມຮູ້, ທັກສະ ແລະ ທັດສະນະຄະຕິ. ໃນແຜນການສອນເຫຼົ່ານີ້ ພວກເຮົາໄດ້ຍົກຕົວຢ່າງຜົນການຮຽນຮູ້ເບື້ອງຕົ້ນພຽງຈຳນວນໜຶ່ງທີ່ສາມາດກຳນົດເປົ້າຫມາຍໄດ້ ໂດຍຄຳນຶງວ່າບົດຮຽນພຽງບົດດຽວ ມັກຈະບໍ່ພຽງພໍທີ່ຈະບັນລຸ ຜົນການຮຽນໃດໜຶ່ງໄດ້ຢ່າງເລິກເຊິ່ງ ຫຼື ກວມເອົາຫຼາຍກວ່າຫນຶ່ງຂົງເຂດການຮຽນຮູ້ໄດ້. ເຮົາຊຸກຍູ້ໃຫ້ຄູຈັດຕາຕະລາງເວລາ ໃຫ້ມີການສອນບົດຮຽນຕິດຕາມເພີ່ມເຕີມເພື່ອສົ່ງເສີມຜົນການຮຽນຮູ້ທີ່ເປັນຈຸດປະສົງຂອງບົດຮຽນເພດສຶກສາເຫຼົ່ານີ້, ແລະ ໃຊ້ປະໂຫຍດຈາກໂອກາດອື່ນໆທັງຢູ່ໃນ ແລະ ນອກຫ້ອງຮຽນ ທີ່ຊ່ວຍໃຫ້ຜູ້ຮຽນສາມາດສະທ້ອນທັດສະນະຄະຕິ ແລະ ຝຶກຝົນ ແລະ ເສີມສ້າງທັກສະ.

TH/DOC/HWT-IQE/23/002-LA-5

amaze

# ເຮົາຈະເປັນພັນທະມິດກັບກຸ່ມຄົນ LGBTQIA+ ໄດ້ແນວໃດ

*ແຜນການສອນ ເພດສຶກສາ ຂອງ* **amaze**

## ຄວາມສອດຄ່ອງກັບ ຄຳແນະນຳສາກົນດ້ານວິຊາການກ່ຽວກັບເພດສຶກສາ

**ແນວຄວາມຄິດຫຼັກທີ 1:** ຄວາມສຳພັນ

- **ຫົວຂໍ້ 1.3:** ຄວາມອົດທົນ, ການກວມລວມ ແລະ ການເຄົາລົບ, ອາຍຸ 9-12 ປີ

**ແນວຄວາມຄິດຫຼັກທີ 5:** ທັກສະສຳລັບການມີສຸຂະພາບ ແລະ ການເປັນຢູ່ທີ່ດີ

- **ຫົວຂໍ້ 5.1:** ບັນທັດຖານ ແລະ ອິດທິພົນຂອງໝູ່ເພື່ອນຕໍ່ການປະພຶດທາງເພດ, ອາຍຸ 9-12 ປີ

## ຄວາມຮູ້ພື້ນຖານຂອງນັກຮຽນ

ນັກຮຽນໄດ້ຮຽນຮູ້ກ່ຽວກັບຄວາມແຕກຕ່າງລະຫວ່າງ ລົດນິຍົມທາງເພດ ແລະ ລັກສະນະທາງເພດ, LGBTQIA+ (ກຸ່ມເພດທາງເລືອກ ເຊິ່ງປະກອບມີ ກຸ່ມຍິງຮັກຍິງ, ກຸ່ມຊາຍຮັກຊາຍ,ກຸ່ມທີ່ຮັກໄດ້ທັງສອງເພດ,ກຸ່ມທີ່ແປງເພດ,ກຸ່ມທີ່ຮັກໂດຍບໍ່ຈຳກັດເພດ, ກຸ່ມເພດກຳກວມ, ກຸ່ມທີ່ບໍ່ສົນໃຈເລື່ອງເພດ) ໝາຍເຖິງຫຍັງ ແລະ ຮັບຮູ້ວ່າຄົນທຸກຄົນມີຄວາມເປັນເອກະລັກ ແລະ ຄວນໄດ້ຮັບກຽດ ແລະ ຄວາມເຄົາລົບ.

## ກຸ່ມອາຍຸເປົ້າໝາຍ

ຊັ້ນມັດທະຍົມສຶກສາປີທີ 2-3 (ອາຍຸປະມານ 10-14 ປີ)

## ເວລາ

45 ນາທີ

## ການກະກຽມຂອງຄູ

- ເຂົ້າເຖິງ ແລະ ເບິ່ງຕົວຢ່າງ ວິດີໂອຂອງ AMAZE ກ່ຽວກັບ **ເຮົາຈະເປັນພັນທະມິດກັບກຸ່ມຄົນ LGBTQIA+ ໄດ້ແນວໃດ** ເພື່ອໃຫ້ລຶ້ງເຄີຍກັບເນື້ອຫາ ແລະ ໃຫ້ແນ່ໃຈວ່າທ່ານຮູ້ສຶກສະບາຍໃຈທີ່ຈະເປີດມັນຢູ່ໃນຫ້ອງຮຽນ.
- ທົດສອບເປີດວິດີໂອເພື່ອໃຫ້ກຽມພ້ອມເບິ່ງໃນລະຫວ່າງການຂຶ້ນສອນ, ບໍ່ວ່າຈະເປັນການວາງລຳດັບການເປີດຈົນຮອດຕອນເລີ່ມຕົ້ນ (ເພື່ອຫຼີກລ່ຽງໂຄສະນາ) ໃນ YouTube, ອອກຈາກ **ລາຍການຫຼິ້ນຂອງ AMAZE,** ຫຼື ສະບັບທີ່ໄດ້ດາວໂຫຼດມາ. ພິຈາລະນາເລືອກໃຊ້ **ລູກຫຼິ້ນຄວາມໄວຂອງ YouTube** ເພື່ອປັບຄວາມໄວຂອງວິດີໂອເພື່ອໃຫ້ແທດເໝາະທີ່ສຸດສຳລັບນັກຮຽນ.

## ອຸປະກອນ/ເອກະສານທີ່ຕ້ອງການ

- ຄອມພິວເຕີ ທີ່ສາມາດເຂົ້າເຖິງອິນເຕີເນັດ ແລະ ລຳໂພງ
- ເຄື່ອງສາຍ LCD ແລະ ຈໍ
- ລິ້ງວິດີໂອ: https://youtu.be/ohH9dfZAM0A
- ສໍຂາວ ແລະ ກະດານດຳ
- ປັດບັນທຶກ



## ຈຸດປະສົງການຮຽນຮູ້

ໃນຕອນທ້າຍຂອງບົດຮຽນນີ້, ນັກຮຽນຈະສາມາດ:

1. ນິຍາມຄວາມໝາຍຂອງການເປັນພັນທະມິດກັບກຸ່ມຄົນ LGBTQIA+. (ຄວາມຮູ້)
2. ຮັບຮູ້ເຖິງຄວາມສຳຄັນຂອງການເປັນພັນທະມິດກັບກຸ່ມຄົນ LGBTQIA+. (ທັດສະນະຄະຕິ)
3. ອະທິບາຍຢ່າງໜ້ອຍສອງວິທີທີ່ຈະເປັນພັນທະມິດກັບກຸ່ມຄົນ LGBTQIA+. (ຄວາມຮູ້)

**ໝາຍເຫດສຳລັບຄູ:** ກິດຈະກຳການສະທ້ອນຄວາມຄິດໃນບົດຮຽນນີ້ອາດເປັນສິ່ງທ້າທາຍສຳລັບນັກຮຽນບາງຄົນດັ່ງນັ້ນ ຈຶ່ງເປັນສິ່ງສຳຄັນທີ່ຈະຕ້ອງຄຳນຶງເຖິງປະຕິກິລິຍາຂອງນັກຮຽນ. ນັກຮຽນບາງຄົນອາດຈະເຄີຍຖືກທຳຮ້າຍມາກ່ອນ ໃນຂະນະທີ່ບາງຄົນອາດຈະທຳຮ້າຍຄົນອື່ນ ຫຼື ເປັນຜູ້ສົມຮູ້ຮ່ວມຄິດ. ຈົ່ງສຸມໃສ່ຂໍ້ດີຂອງການປະຕິບັດທີ່ດີຕໍ່ຄົນອື່ນ ແລະ ບໍ່ອະນຸຍາດໃຫ້ນັກຮຽນຕັ້ງຊື່, ຕຳນິ ຫຼື ເຮັດໃຫ້ໝູ່ເພື່ອນອັບອາຍ. ນີ້ອາດຈະໝາຍເຖິງການຂັດຈັງຫວະຜູ້ທີ່ເລີ່ມເລົ່າເລື່ອງກ່ຽວກັບສິ່ງທີ່ເພື່ອນຮ່ວມຫ້ອງຮຽນໄດ້ເຮັດ. ຊຸກຍູ້ໃຫ້ຜູ້ທີ່ຕ້ອງການລາຍງານກ່ຽວກັບການຂົ່ມເຫັງທີ່ອາດເກີດຂຶ້ນ ໃຫ້ລາຍງານກັບທ່ານເປັນສ່ວນຕົວ.

## ຂັ້ນຕອນ

### ຂັ້ນຕອນທີ 1

ບອກນັກຮຽນວ່າທ່ານກຳລັງຈະເວົ້າເຖິງວິທີການຊ່ວຍຄົນໆໜຶ່ງເມື່ອມີໃຜຜູ້ໜຶ່ງໃຈຮ້າຍກັບລາວ, ຫຼືເວົ້າອີກຢ່າງໜຶ່ງວ່າ ຄືວິທີການຈະເປັນພັນທະມິດກັນກັບລາວ, ໂດຍເນັ້ນໃສ່ການເປັນພັນທະມິດກັບກຸ່ມຄົນ LGBTQIA+. ກ່ອນອື່ນໝົດ, ໃຫ້ແຈກບັດບັນທຶກສອງໃບໃຫ້ນັກຮຽນແຕ່ລະຄົນ.

ຂໍໃຫ້ພວກເຂົາໃຊ້ເວລາປະມານສອງສາມນາທີ ເພື່ອຄິດເຖິງເວລາທີ່ພວກເຂົາຮູ້ສຶກວ່າມີໃຜຜູ້ຫນຶ່ງເຮັດບໍ່ດີກັບພວກເຂົາຫຼື ພວກເຂົາບໍ່ໄດ້ຮັບການປະຕິບັດທີ່ດີ ແລະ ບໍ່ວ່າຈະເປັນຍ້ອນເພດ, ບົດບາດທາງເພດ, ອາຍຸ, ຄວາມສາມາດ, ຊົນເຜົ່າ, ສາດສະໜາ, ເງິນທີ່ຄອບຄົວພວກເຂົາມີ, ຫຼື ລົດນິຍົມທາງເພດ ຫຼື ລັກສະນະທາງເພດ ຂອງພວກເຂົາ.

ຂໍໃຫ້ພວກເຂົາໃຊ້ເວລາສອງສາມນາທີຕື່ມ ເພື່ອຄິດກ່ຽວກັບສິ່ງທີ່ມີຄົນເວົ້າ ຫຼື ເຮັດ, ມັນເຮັດໃຫ້ພວກເຂົາຮູ້ສຶກແນວໃດ ແລະ ພວກເຂົາເຮັດແນວໃດກັບສິ່ງນັ້ນ ຖ້າວ່າໄດ້ເຮັດ.

ຫຼັງຈາກອະນຸຍາດໃຫ້ມີການຄົ້ນຄິດແລ້ວ, ໃຫ້ຖາມວ່າ, **"ເຈົ້າຈະໃຊ້ຄຳສັບໃດ ເພື່ອເປັນການອະທິບາຍຄວາມຮູ້ສຶກຂອງເຈົ້າ?"** ຂໍໃຫ້ເຂົາເຈົ້າຂຽນຄຳສັບຄຳນັ້ນ ລົງໃສ່ບັດບັນທຶກຂອງເຂົາເຈົ້າ. ໃນຂະນະທີ່ເຂົາເຈົ້າກຳລັງຂຽນ, ໃຫ້ທ່ານຂຽນ "**ເມື່ອຂ້ອຍບໍ່ໄດ້ຮັບການປະຕິບັດທີ່ດີ, ຂ້ອຍຮູ້ສຶກ**..." ຢູ່ເທິງກະດານດຳ.

ເມື່ອພວກເຂົາເຮັດບັດບັນທຶກສຳເລັດແລ້ວ, ໃຫ້ຮອບຮວມບັດເຫຼົ່ານັ້ນ, ສະຫຼັບບັດ, ແລະ ແຈກຢາຍຄືນໃຫ້ນັກຮຽນອີກເທື່ອໜຶ່ງ. ຍ່າງໄປທົ່ວຫ້ອງ ແລະ ໃຫ້ນັກຮຽນແຕ່ລະຄົນຕື່ມປະໂຫຍກທີ່ຢູ່ເທິງກະດານດ້ວຍຄຳທີ່ຂຽນໄວ້ໃນບັດຂອງພວກເຂົາ ແລະ ຂຽນມັນລົງໃສ່ກະດານດຳ. ຖ້າພວກເຂົາບໍ່ແບ່ງປັນ, ຫຼື ມີແຕ່ນັກຮຽນ ໜຶ່ງ ຫຼື ສອງຄົນເວົ້າ, ທ່ານຢ່າລັງເລທີ່ຈະເພີ່ມສອງສາມຄຳ ໂດຍກ່າວວ່າ, **"ຂ້ອຍເຄີຍໄດ້ຍິນຄົນທີ່ຮູ້ສຶກວ່າບໍ່ໄດ້ຮັບການປະຕິບັດທີ່ດີ ແລະ ພວກເຂົາເວົ້າວ່າພວກເຂົາຮູ້ສຶກ:"**

- ເສົ້າ
- ຕໍ່າຕ້ອຍ
- ບໍ່ມີໃຜສົນໃຈ
- ບໍ່ມີຄ່າ
- ໂງ່
- ບໍ່ມີອຳນາດ
- ໃຈຮ້າຍ
- ຄຽດແຄ້ນ

ບັດນີ້, ຂໍໃຫ້ນັກຮຽນຄິດວ່າ ການມີເພື່ອນ ຫຼື ຄົນທີ່ເຂົາເຈົ້າໄວ້ວາງໃຈເພື່ອສະໜັບສະໜູນເຂົາເຈົ້າ ຈະເຮັດໃຫ້ສະຖານະການນັ້ນງ່າຍຂຶ້ນ ຫຼື ບໍ່. ໃຫ້ຖາມວ່າ, "ເຄີຍມີຕອນໃດບໍ່ ທີ່ເຈົ້າບໍ່ໄດ້ຮັບການປະຕິບັດທີ່ດີ ແລະ ມີຄົນອື່ນເຂົ້າມາຊ່ວຍ? ພວກເຂົາເຮັດຫຍັງ? ເຈົ້າຮູ້ສຶກແນວໃດທີ່ໄດ້ຮັບການຊ່ວຍເຫຼືອຈາກບຸກຄົນນັ້ນ?" ຂໍໃຫ້ພວກເຂົາຂຽນຫນຶ່ງຄຳນັ້ນ ລົງໃສ່ໃນບັດບັນທຶກອີກໃບໜຶ່ງທີ່ເຫຼືອ ກ່ຽວກັບຄວາມຮູ້ສຶກເມື່ອໄດ້ຮັບ

ການສະໜັບສະໜູນ. ໃນຂະນະທີ່ນັກຮຽນຂຽນຄຳສັບຕ່າງໆນັ້ນ, ໃຫ້ທ່ານຂຽນ **"ເມື່ອມີໃຜຜູ້ໜຶ່ງຊ່ວຍຂ້ອຍໃນສະຖານະການທີ່ຍາກລຳບາກ, ຂ້ອຍຮູ້ສຶກ..."** ເທິງກະດານດຳ. ເມື່ອພວກເຂົາເຮັດບັດບັນທຶກສຳເລັດແລ້ວ, ໃຫ້ຮວບຮວມບັດເຫຼົ່ານັ້ນ, ສະຫຼັບບັດ, ແລະ ແຈກຢາຍຄືນໃຫ້ນັກຮຽນອີກເທື່ອໜຶ່ງ. ຍ່າງໄປທົ່ວຫ້ອງ ແລະ ໃຫ້ນັກຮຽນແຕ່ລະຄົນຕື່ມປະໂຫຍກທີ່ຢູ່ເທິງກະດານ ດ້ວຍຄຳທີ່ຂຽນໄວ້ໃນບັດຂອງພວກເຂົາ ແລະ ຂຽນມັນລົງໃສ່ກະດານດຳ. ຖ້າພວກເຂົາບໍ່ສົ່ງບັດ, ຫຼື ມີແຕ່ນັກຮຽນ ໜຶ່ງ ຫຼື ສອງຄົນທີ່ສົ່ງ, ທ່ານຢ່າລັງເລທີ່ຈະເພີ່ມສອງສາມຄຳໂດຍກ່າວວ່າ,**"ຂ້ອຍເຄີຍໄດ້ຍິນຄົນທີ່ຮູ້ສຶກວ່າໄດ້ຮັບການຊ່ວຍເຫຼືອຈາກຄົນອື່ນເວົ້າວ່າພວກເຂົາຮູ້ສຶກ:"**

- ດີ
- ປາບປື້ມໃຈ
- ໄດ້ຮັບການໃສ່ໃຈ
- ມີຄວາມສຸກ
- ໄດ້ຮັບຄວາມເຂັ້ມແຂງ
- ມີພະລັງ
- ມີກຳລັງໃຈ

ເມື່ອຄຳສັບທັງໝົດຢູ່ເທິງກະດານດຳແລ້ວ, ໃຫ້ເບິ່ງຄືນທັງສອງລາຍການແລະອຳນວຍຄວາມສະດວກໃຫ້ນັກຮຽນສະທ້ອນຄືນຄຳສັບເຫຼົ່ານັ້ນ ໂດຍການຖາມຄຳຖາມເຫຼົ່ານີ້:

- ເຈົ້າຄິດແນວໃດກັບຄຳສັບເຫຼົ່ານີ້ ຈາກປະສົບການທີ່ເຈົ້າບໍ່ໄດ້ຮັບການປະຕິບັດທີ່ດີ ແລະ ມີຄົນຊ່ວຍມາຊ່ວຍເຫຼືອເຈົ້າ?
- ເຈົ້າສັງເກດເຫັນຫຍັງ ກ່ຽວກັບຄຳສັບທີ່ເຈົ້າຄິດຂຶ້ນມາໃນການຕອບຄຳຖາມທັງສອງຂໍ້?
- ເປັນຫຍັງເຈົ້າຈຶ່ງຄິດວ່າ ການຊ່ວຍເຫຼືອຄົນອື່ນທີ່ບໍ່ໄດ້ຮັບການປະຕິບັດທີ່ດີ ຫຼື ຖືກຂົ່ມເຫງ ເປັນສິ່ງທີ່ສຳຄັນ?
- ເຈົ້າຄິດວ່າຈະເຮັດແນວໃດ ຖ້າເຈົ້າຢູ່ໃນສະຖານະການທີ່ຄົນທີ່ເຈົ້າຢູ່ນຳບໍ່ໄດ້ຮັບການປະຕິບັດທີ່ດີ?

(20 ນາທີ)

## ຂັ້ນຕອນທີ 2

ຕໍ່ໄປ, ໃຫ້ອະທິບາຍວ່າ ໂດຍທົ່ວໄປແລ້ວພັນທະມິດ ແມ່ນຜູ້ທີ່ເຮັດສິ່ງຕ່າງໆ ຄືດັ່ງທີ່ເຮົາໄດ້ເວົ້າໄປ (ອ້າງອີງຈາກຄຳຕອບຂອງຄຳຖາມສຸດທ້າຍທີ່ຜ່ານມາ) ແລະ ພັນທະມິດກັບ LGBTQIA+ ໂດຍທົ່ວໄປ ແມ່ນຜູ້ທີ່ບໍ່ແມ່ນ LGBTQIA+ ແລະ ແມ່ນຜູ້ທີ່ສະໜັບສະໜູນ ແລະ ຢູ່ຂ້າງກຸ່ມຄົນ LGBTQIA+. ບາງຄັ້ງກຸ່ມຄົນ LGBTQIA+ ອາດຕົກເປັນເປົ້າໝາຍ ຍ້ອນລົດນິຍົມທາງເພດ ແລະ ລັກສະນະທາງເພດຂອງພວກເຂົາ, ເຊິ່ງເປັນສິ່ງທີ່ຜິດ ແລະ ທຳຮ້າຍຈິດໃຈ ແລະ ເມື່ອມີຄົນອື່ນສະໜັບສະໜູນພວກເຂົາ, ບໍ່ພຽງແຕ່ເຮັດໃຫ້ທຸກຄົນຮູ້ສຶກດີຂຶ້ນ, ມັນຍັງຊ່ວຍຊຸກຍູ້ໃຫ້ຄົນອື່ນປະຕິບັດແບບດຽວກັນ.

**ໝາຍເຫດສຳລັບຄູ:** ໃນຫ້ອງຮຽນອາດພົບວ່າບາງຄັ້ງຄົນທີ່ຖືກເບິ່ງວ່າເປັນ LGBTQIA+ ແຕ່ບໍ່ໄດ້ເປັນ ອາດຈະຖືກປະຕິບັດບໍ່ດີ ຫຼື ຖືກຂົ່ມເຫັງ - ຖ້າເປັນດັ່ງນັ້ນ, ຈຶ່ງໃຫ້ນັກຮຽນຮັບຮູ້ວ່າ ພຶດຕິກຳນີ້ເປັນສິ່ງທີ່ຜິດ ແລະ ເຮັດໃຫ້ເຈັບປວດເຊັ່ນດຽວກັນ.

ຫາກຕ້ອງການຮູ້ເພີ່ມຕື່ມກ່ຽວກັບວິທີທີ່ຈະເປັນພັນທະມິດ, ໃຫ້ເວົ້າວ່າ ຕໍ່ໄປທ່ານຈະສະແດງວິດີໂອສັ້ນໃຫ້ເບິ່ງ. ຈາກນັ້ນ ໃຫ້ທ່ານເປີດວິດີໂອ ທີ່ມີຄວາມຍາວສອງນາທີ ຂອງ AMAZE ກ່ຽວກັບ **ເຮົາຈະເປັນພັນທະມິດກັບ LGBTQIA+ ໄດ້ແນວໃດ.**




https://bit.ly/good-ally

(5 ນາທີ)

## ຂັ້ນຕອນທີ 3

ຫຼັງຈາກເບິ່ງວິດີໂອແລ້ວ, ໃຫ້ອຳນວຍຄວາມສະດວກໃນການທົບທວນຄືນກ່ຽວກັບວິດີໂອ ພ້ອມທັງຕັ້ງຄຳຖາມຂ້າງລຸ່ມນີ້ ແລະ ເມື່ອນັກຮຽນ**ຕອບສອງຄຳຖາມສຸດທ້າຍ**, ໃຫ້ບັນທຶກຄຳຕອບຂອງເຂົາເຈົ້າລົງໃສ່ກະດານດຳ.

- ເຈົ້າຄິດແນວໃດກັບວິດີໂອ?
- ການເປັນພັນທະມິດກັບກຸ່ມຄົນ LGBTQIA+ ໝາຍຄວາມວ່າແນວໃດ?
- ມີວິທີໃດແດ່ທີ່ຄົນເຮົາສາມາດເປັນພັນທະມິດກັບກຸ່ມຄົນ LGBTQIA+
- ເຈົ້າສາມາດຄິດຫາວິທີອື່ນທີ່ຈະສະໜັບສະໜູນກຸ່ມຄົນ LGBTQIA+ ອີກໄດ້ບໍ່?

**ໝາຍເຫດສຳລັບຄູ:** ໃນບາງກໍລະນີ, ນັກຮຽນອາດໃຊ້ພາສາ ຫຼື ເລື່ອງຕະຫຼົກທີ່ບໍ່ເໝາະສົມ ເຊິ່ງເປັນການດູໝິ່ນກຸ່ມຄົນ LGBTQIA+. ຖ້າເຫດການນີ້ເກີດຂຶ້ນ, ໃຫ້ຂັດຂວາງສະຖານະການ, ຂໍໃຫ້ນັກຮຽນຢຸດ, ອະທິບາຍວ່າຄຳເວົ້າເຫຼົ່ານັ້ນທຳຮ້າຍຈິດໃຈ, ແລະ ແກ້ໄຂພຶດຕິກຳທີ່ບໍ່ເໝາະສົມກັບນັກຮຽນເຫຼົ່ານັ້ນຫຼັງເລີກຮຽນ.

ໂດຍອີງໃສ່ກັບສິ່ງທີ່ນັກຮຽນເວົ້າ, ຮັບປະກັນວ່າໄດ້ ກ່າວເຖິງສິ່ງເຫຼົ່ານີ້:

- ໃຫ້ໝູ່ເພື່ອນ LGBTQIA+ ແລະ ຄົນທີ່ເຈົ້າຮັກ ຮູ້ວ່າເຈົ້າພ້ອມທີ່ຈະຮັບຟັງຖ້າພວກເຂົາຕ້ອງການໂອ້ລົມ.
- ຢືນຢັດເພື່ອໃຜຜູ້ໜຶ່ງ ຫາກພວກເຂົາຖືກທຳຮ້າຍ ຫຼື ຖືກຂົ່ມເຫັງ ຍ້ອນລົດນິຍົມທາງເພດ ຫຼື ລັກສະນະທາງເພດ, ເຊັ່ນການເວົ້າວ່າ: "ຂ້ອຍຮູ້ສຶກບໍ່ສະບາຍໃຈແທ້ໆ ເມື່ອເຈົ້າເວົ້າໃນແງ່ລົບກ່ຽວກັບກຸ່ມຄົນ LGBTQIA+".
- ເຂົ້າຮ່ວມສະມາຄົມ, ກຸ່ມຄົນ ຫຼື ອົງການຈັດຕັ້ງ ທີ່ສະໜັບສະໜູນກຸ່ມຄົນ LGBTQIA+

(15 ນາທີ)

## ຂັ້ນຕອນທີ 4

ເພື່ອສະຫຼຸບ, ຈົ່ງໃຫ້ນັກຮຽນຮັບຮູ້ວ່າຄົນສ່ວນໃຫຍ່ ເຄີຍປະສົບກັບບາງຄົນທີ່ໃຈຮ້າຍກັບພວກເຂົາ ຍ້ອນເຫດຜົນໃດໜຶ່ງ. ກຸ່ມຄົນ LGBTQIA+ ສາມາດປະສົບກັບສິ່ງນີ້ໄດ້ຫຼາຍກວ່າ ພຽງແຕ່ຍ້ອນລົດນິຍົມທາງເພດ ຫຼື ລັກສະນະທາງເພດຂອງເຂົາເຈົ້າ. ຂ່າວດີແມ່ນວ່າ ທຸກຄົນສາມາດເປັນພັນທະມິດໂດຍການຊ່ວຍເຫຼືອ ແລະ ສະໜັບສະໜູນກຸ່ມຄົນ LGBTQIA+. ກ່ອນທີ່ຈະເລີກຮຽນໃນມື້ນີ້, ໃຫ້ເອົາເຈ້ຍມາແຜ່ນໜຶ່ງ ແລະ ຂຽນຄວາມຫມາຍຂອງການເປັນພັນທະມິດກັບ LGBTQIA+. ຈາກນັ້ນ ສົ່ງເຈ້ຍຂອງເຈົ້າເມື່ອອອກຈາກຫ້ອງຮຽນ.

(5 ນາທີ)

**ໝາຍເຫດສຳລັບຄູ:** ໃນລະຫວ່າງບົດຮຽນນີ້, ທ່ານອາດຈະຕ້ອງການໃຊ້ກ່ອງຄຳຖາມທີ່ບໍ່ເປີດເຜີຍຊື່ ເພາະວ່ານັກຮຽນອາດມີຄຳຖາມກ່ຽວກັບລົດນິຍົມທາງເພດ ແລະ ລັກສະນະທາງເພດ ເນື່ອງຈາກບໍ່ມີຄຳແນະນຳໃນຫົວຂໍ້ນີ້ມາກ່ອນ ຫຼືຍ້ອນວ່າເຂົາເຈົ້າອາດບໍ່ຕ້ອງການຖາມຕໍ່ຫນ້າຄົນອື່ນ.

## ສະຫຼຸບປະເດັນທີ່ສຳຄັນ

- ບາງຄັ້ງຄົນເຮົາອາດໃຈຮ້າຍກັບຄົນອື່ນ ພຽງແຕ່ຍ້ອນ ອາຍຸ, ເພດ, ຊົນເຜົ່າ, ສາດສະໜາ, ຄວາມສາມາດ, ຫຼືຈຳນວນເງິນທີ່ຄອບຄົວຂອງພວກເຂົາມີ.
- ກຸ່ມຄົນ LGBTQIA+ ສາມາດປະສົບກັບສິ່ງນີ້ໄດ້ຫຼາຍກວ່າ ພຽງແຕ່ຍ້ອນລົດນິຍົມທາງເພດຂອງເຂົາເຈົ້າ ຫຼືແມ່ນແຕ່ວິທີການສະແດງອອກທາງເພດຂອງເຂົາເຈົ້າ.
- ທຸກຄົນສາມາດເປັນພັນທະມິດກັບກຸ່ມຄົນ LGBTQIA+ ໄດ້ ໂດຍການສະແດງການສະໜັບສະໜູນໃນຫຼາກຫຼາຍຮູບແບບ ເຊັ່ນ: ການຮັບຟັງ ຫຼື ເວົ້າຂຶ້ນຖ້າຜູ້ໃດຜູ້ໜຶ່ງປະຕິບັດບໍ່ດີ.

## ທາງເລືອກສຳລັບການປະເມີນຈຸດປະສົງການຮຽນຮູ້ໃນຂະນະສະຫຼຸບບົດຮຽນ

ແຕ່ລະກິດຈະກຳໃນຫ້ອງຮຽນ ມີຈຸດປະສົງເພື່ອແນະນຳ ແລະ ເສີມສ້າງເນື້ອໃນທີ່ສອນ. ການສົນທະນາພາຍຫຼັງການສະແດງວິດີໂອ ລວມທັງການຂຽນເຈ້ຍກ່ອນອອກຈາກຫ້ອງ ຈະຊ່ວຍໃຫ້ຄູຮູ້ວ່ານັກຮຽນເຂົ້າໃຈ ເຖິງການເປັນພັນທະມິດກັບກຸ່ມຄົນ LGBTQIA+ ຫຼື ບໍ່.

## ຄໍາແນະນໍາໃນການປັບປ່ຽນສໍາລັບການຮຽນການສອນທາງໄກ

ໃນກໍລະນີທີ່ເປັນການສອນທາງໄກ, ນໍາໃຊ້ລະບົບດິຈິຕອນເຊັ່ນ Google Classroom ຫຼື Zoom. ສໍາລັບ ບັດບັນທຶກນັ້ນ, ໃຫ້ພິຈາລະນາໃຊ້ ກະດານອອນລາຍ (Jamboard) ເຊິ່ງຈະບໍ່ມີການເປີດເຜີຍຕົວຕົນ ຄ້າຍກັບການສະຫຼັບບັດ ໂດຍນັກຮຽນຂຽນຄວາມຮູ້ສຶກໃນການຕອບຄໍາຖາມທັງສອງຂໍ້ໃສ່ແຕ່ລະດ້ານຂອງ Jamboard. ຄູອ່ານອອກສຽງ ຫຼື ຂໍໃຫ້ນັກຮຽນອາສາສະໝັກອ່ານອອກສຽງຄໍາສັບໃນແຕ່ລະດ້ານເມື່ອຂຽນສໍາເລັດແລ້ວ. ຖ້າບໍ່ດັ່ງນັ້ນ, ແມ່ນໃຫ້ຈົດຄໍາຕອບຂອງນັກຮຽນໃສ່ກະດານອອນລາຍ.

## ວຽກບ້ານ (ຖ້າມີ)

ບໍ່ມີ

ດັດແປງມາຈາກ Rice, D: ຄວາມແຕກຕ່າງທີ່ພັນທະມິດສ້າງຂຶ້ນ ໂດຍ ANSWER. AMAZE. ເຄື່ອງມື LGBTQ - ປົດຮຽນກ່ຽວກັບຄວາມແຕກຕ່າງທີ່ພັນທະມິດສ້າງຂຶ້ນ. ການສະໜັບສະໜູນສໍາລັບຊາວໜຸ່ມ. ຫຼັກສູດຊັ້ນອະນຸບານເຖິງມັດທະຍົມສຶກສາປີທີ 7 ກ່ຽວກັບສິດທິ, ຄວາມເຄົາລົບ, ຄວາມຮັບຜິດຊອບ, ເປັນການປ່ຽນແປງທ່ານ. ADL. ທໍາຄວາມເຂົ້າໃຈກ່ຽວກັບການກຽດຊັງກຸ່ມຄົນຮັກຮ່ວມເພດ/ການຈໍາແນກກຸ່ມຄົນຮັກຮ່ວມເພດ ແລະ ວິທີເປັນພັນທະມິດ. ອຸຍແນສໂກ ແລະ ຄະນະ. ເຊື່ອມຕໍ່ກັບຄວາມເຄົາລົບ. ຜົນກະທົບຂອງຄວາມຮຸນແຮງທາງເພດ.